# ຝຶກອົບຮົມແບບໃກ້ຊິດ ຫົວຂໍ້: ການລົງທຶນດ້ານກະສິກຳ ແບບມີຄວາມຮັບຜິດຊອບ ສຳລັບຊາວກະສິກອນ




## *ທ່ານຈະຮຽນຮູ້ຫຍັງແດ່?*

- ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ແລະ ນິຕິກຳທີ່ກ່ຽວຂ້ອງກັບການລົງທຶນດ້ານກະສິກຳ;
- ສິດ ແລະ ໜ້າທີ່ຂອງນັກລົງທຶນຕໍ່ກັບການລົງທຶນຂອງຕົນ;
- ການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ;
- ສິ່ງທີ່ຊາວກະສິກອນຕ້ອງຮັບຮູ້ເພື່ອຮັບປະກັນສິດຂອງຕົນເຊັ່ນ: ສັນຍາກະສິກຳ.

## *ວາລະຝຶກອົບຮົມມີຫຍັງແດ່?*

ຝຶກອົບຮົມແບບໃກ້ຊິດ ໃຊ້ເວລາ 4 ວັນ:

- 2 ວັນ ຝຶກກ່ຽວກັບທິດສະດີດ້ານກົດໝາຍ;
- 1 ວັນ ສຳລັບຄູຝຶກ ແລະ ຜູ້ເຂົ້າຮ່ວມ ວາງແຜນ, ກະກຽມ ແລະ ຝຶກຊ້ອມຮ່ວມກັນ ກ່ອນລົງໄປທົດລອງຢູ່ຂັ້ນບ້ານ;
- 1 ວັນ ສຳລັບ ຝຶກທົດລອງຢູ່ຂັ້ນບ້ານ ແລະ ປະເມີນຜົນຮ່ວມກັນ.

## *ວິທີການດຳເນີນງານມີແນວໃດແດ່?*

- ເຕັກນິກວິທີການຮຽນຮູ້ແບບມີສ່ວນຮ່ວມ ແລະ ມີປະຕິກິລິຍາໂຕ້ຕອບ;
- ຝຶກອົບຮົມ ແມ່ນດຳເນີນໂດຍຄູຝຶກຫຼັກທີ່ໄດ້ຮັບການອົບຮົມ ແລະ ມີປະສົບການເຮັດວຽກນຳຊຸມຊົນ;
- ເຄື່ອງມືປະກອບດ້ວຍແຜນບົດສອນ ແລະ ອຸປະກອນ.

## *ເນື້ອໃນຂອງຫຼັກສູດມີຫຍັງແດ່?*

- ການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວດ້ວຍຄວາມສະໝັກໃຈໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC);
- ສິດຂອງຊາວກະສິກອນໃນການເຮັດສັນຍາກະສິກຳ;
- ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບ ສັນຍາກະສິກຳ;
- ພາລະບົດບາດຂອງພາກສ່ວນທີ່ກ່ຽວຂ້ອງຕໍ່ກັບການລົງທຶນດ້ານກະສິກຳ;
- ສິດ ແລະ ໜ້າທີ່ຂອງນັກລົງທຶນ;
- ການເຈລະຈາຕໍ່ລອງ;
- ຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ, ການທົດແທນຄ່າເສຍຫາຍທີ່ເກີດຈາກການລົງທຶນ ແລະ ນະໂຍບາຍທາງດ້ານແຮງງານ.

## *ສະເໜີຂໍຮັບການຝຶກອົບຮົມແບບໃກ້ຊິດໄດ້ແນວໃດ?*

*ກ່ອນຝຶກອົບຮົມແບບໃກ້ຊິດ:*

- **4 ອາທິດລ່ວງໜ້າ:** ທ່ານຕ້ອງສົ່ງໜັງສືສະເໜີ ເພື່ອເຊີນໃຫ້ໂຄງການໄລຟ໌ ໄປຈັດຝຶກອົບຮົມແບບໃກ້ຊິດ ໃຫ້ແກ່ອົງກອນຂອງທ່ານ ແລະ ຄູ່ຮ່ວມງານທ້ອງຖິ່ນ;
- **3 ອາທິດລ່ວງໜ້າ:** ສົ່ງແຜນບົດຮຽນ ໃຫ້ແກ່ຄູ່ຮ່ວມງານພາກລັດ ແລະ ແບ່ງປັນຄຳຄິດເຫັນທີ່ມີ ຈາກອົງກອນຂອງທ່ານ ຫຼື ຈາກຄູ່ຮ່ວມງານທ້ອງຖິ່ນ ໃຫ້ແກ່ໂຄງການໄລຟ໌;
- **2 ອາທິດລ່ວງໜ້າ:** ສົ່ງລາຍຊື່ບ້ານເພື່ອເຮັດຝຶກອົບຮົມທົດລອງ, ສະຖານທີ່, ໄລຍະທາງ, ລວມທັງເຜົ່າ ແລະ ກຳນົດລະອຽດວ່າ ຈຳເປັນຕ້ອງມີລ່າມແປພາສາ ຫຼື ບໍ່;
- **1 ອາທິດລ່ວງໜ້າ:** ແຈ້ງໃຫ້ໂຄງການໄລຟ໌ຮູ້ ກ່ຽວກັບຈຳນວນຂອງບ້ານ ທີ່ອົງກອນຂອງທ່ານ ວາງແຜນຈະຈັດຝຶກອົບຮົມ ພາຍຫຼັງຝຶກອົບຮົມຈາກໂຄງການໄລຟ໌.

*ພາຍຫຼັງຝຶກອົບຮົມແບບໃກ້ຊິດ:*

- ແຈ້ງໃຫ້ໂຄງການໄລຟ໌ຮັບຮູ້ ກ່ຽວກັບການຝຶກອົບຮົມຂັ້ນຊຸມຊົນຂອງໜ່ວຍງານທ່ານ: ຊື່ບ້ານ, ເມືອງ, ຈຳນວນຂອງຜູ້ເຂົ້າຮ່ວມທັງໝົດ, ຈຳນວນຜູ້ເຂົ້າຮ່ວມທີ່ເປັນເພດຍິງ-ຊາຍ ແລະ ຊົນເຜົ່າ.

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
VILLAGE FOCUS INTERNATIONAL
ສະຫະພາບເອີຣົບ European Union
ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 4697
ໂທ: +856 021 312 519, ແຟກ +856 021 315 841
Email: lifeproject@villagefocus.org